VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໄທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
****

023 ເລກທີ:/ວຈຊຕ
ນະຄອນຫຼວງວຽງຈັນ, ວັນທີ: 01 OCT 2021

ຮຽນ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເລື່ອງ: ແຈ້ງມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ຄັ້ງທີ 1/2021

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍລາມ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.

- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັ້ນເຕີລາວມະຫາຊົນ (ວຈຊຕ) ໄດ້ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1/2021 ໃນວັນທີ 30 ກັນຍາ 2021 ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 20 ທ່ານ, ແບ່ງເປັນຜູ້ຖືຮຸ້ນທີ່ເຂົ້າມາດ້ວຍຕົນເອງຈຳນວນ 15 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຈຳນວນ 05 ທ່ານ ເຊິ່ງຖືຮຸ້ນລວມທັງໝົດ 143.552.000 ຮຸ້ນ ຫຼື ເທົ່າກັບ 97,52 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງ ວຈຊຕ, ໂດຍກອງປະຊຸມໄດ້ມີມະຕິດັ່ງນີ້:

01: ພິຈາລະນາ ແລະ ຮັບຮອງການປ່ຽນແປງວັດຖຸປະສົງການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນທີ່ຍັງເຫຼືອ

ຍ້ອນວ່າວາລະນີ້ເປັນລາຍການທີ່ກ່ຽວພັນ, ສະນັ້ນ ບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດທີ່ເປັນຜູ້ທີ່ກ່ຽວພັນຂອງວາລະນີ້ ເຊິ່ງໄດ້ຖືຮຸ້ນລວມທັງໝົດ 95.999.200 ຮຸ້ນ ແມ່ນບໍ່ມີສິດໃນການລົງຄະແນນສຽງ, ການນັບຄະແນນສຽງແມ່ນນັບສະເພາະຄະແນນສຽງຂອງຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້

VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຖືຮຸ້ນທີ່ຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ ໂດຍຍົກເວັ້ນບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບ ວົງຈອນໜອງຈັນຕອນເໜືອ ຈຳກັດ. ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ກ່ຽວກັບການ ປ່ຽນແປງຈັດຖຸປະສົງການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳ ໜ່າຍຮຸ້ນທີ່ຍັງເຫຼືອ ເຊິ່ງປ່ຽນຈາກ " ການ ຮັບຊື້ຊັບສິນ " ມາເປັນ " ການຊຳລະເງິນກູ້ ແລະ ດອກເບ້ຍໃຫ້ຜູ້ໃຫ້ກູ້ໂດຍອີງຕາມສັນຍາການກູ້ຢືມລະຫວ່າງ ວຈຊຕ ແລະ ບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ" ໂດຍມີຄະແນນ ສຽງດັ່ງນີ້:

- ເຫັນດີ 47.552.800 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມແລະ ມີສິດລົງຄະແນນສຽງ
- ລວມ 47.552.800 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ

ຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕ້ອງລາຍງານ.

ດ້ວຍຄວາມເຄົາລົບນັບຖືຢ່າງສູງ

ບໍລິສັດ ວຽງຈັນເຊັ້ນເຕີ ມະຫາຊົນ
Vientiane Center Lao Public Company

ປະທານກອງປະຊຸມ